ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 625 /ນຍ
ນະຄອນຫຼວງວຽງຈັນ, ວັນທີ 22. 10. 2021

# ດຳລັດ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
# ຂອງກະຊວງ ເຕັກໂນໂລຊີ ແລະ ການສື່ສານ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ມະຕິ ຂອງສະພາແຫ່ງຊາດວ່າດ້ວຍ ການຮັບຮອງເອົາໂຄງປະກອບກົງຈັກລັດຖະບານ ແລະ ສະມາຊິກລັດຖະບານ ສະບັບເລກທີ 09/ສພຊ, ລົງວັນທີ 22 ມີນາ 2021;
- ອີງຕາມ ໜັງສືສະເໜີຂອງກະຊວງພາຍໃນ ສະບັບເລກທີ 223/ພນ, ລົງວັນທີ 20 ກັນຍາ 2021.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງກະຊວງ ເຕັກໂນໂລຊີ ແລະ ການສື່ສານ ແນໃສ່ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ປະຕິບັດກົດໝາຍ ແລະ ລະບຽບການຂອງລັດໃນການຄຸ້ມຄອງ ແລະ ພັດທະນາວຽກງານຂອງຂະແໜງເຕັກໂນໂລຊີ ແລະ ການສື່ສານ ໃນຂອບເຂດທົ່ວປະເທດ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ຂຽນເປັນຕົວອັກສອນຫຍໍ້ວ່າ “ກຕສ” ຂຽນເປັນພາສາອັງກິດ “Ministry of Technology and Communications” “MTC” ແມ່ນກົງຈັກໜຶ່ງຂອງລັດຖະບານ, ມີພາລະບົດບາດ ເປັນເສນາທິການໃຫ້ແກ່ລັດຖະບານໃນການຄຸ້ມຄອງມະຫາພາກກ່ຽວກັບວຽກງານເຕັກໂນໂລຊີ, ນະວັດຕະກຳ, ໂທລະຄົມມະນາຄົມ, ອິນເຕີເນັດ, ໄປສະນີ ແລະ ຄວາມປອດໄພໄຊເບີ ໃນຂອບເຂດທົ່ວປະເທດ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ໜ້າທີ່ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານມີດັ່ງນີ້:

1. ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ມະຕິຂອງສະພາແຫ່ງຊາດ, ລັດຖະບັນຍັດຂອງປະທານປະເທດ, ດຳລັດ, ມະຕິ ແລະ ນິຕິກຳຂອງລັດຖະບານ ແລະ ນາຍົກລັດຖະມົນຕີ;
2. ຄົ້ນຄວ້າຫັນເອົາແນວທາງນະໂຍບາຍຂອງພັກ, ນະໂຍບາຍ, ຍຸດທະສາດ, ແຜນການ ແລະ ມະຕິຕົກລົງຂອງລັດຖະບານ ກ່ຽວກັບວຽກງານເຕັກໂນໂລຊີ ແລະ ການສື່ສານ ມາເປັນແຜນຍຸດທະສາດ, ແຜນການ, ແຜນງານ ແລະ ໂຄງການລະອຽດຂອງຂະແໜງຂອງຕົນ ພ້ອມທັງຮັບຜິດຊອບໃນການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ ແລະ ປະກົດຜົນເປັນຈິງ;
3. ຄົ້ນຄວ້າຮ່າງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ນິຕິກຳຂອງຂະແໜງເຕັກໂນໂລຊີ ແລະ ການສື່ສານ ເພື່ອສະເໜີຕໍ່ລັດຖະບານ;
4. ສ້າງ, ປັບປຸງພື້ນຖານໂຄງລ່າງດ້ານເຕັກໂນໂລຊີ ແລະ ການສື່ສານ ໃນຂອບເຂດທົ່ວປະເທດ ເພື່ອເປັນສິ່ງອຳນວຍຄວາມສະດວກ ໃນການເຄື່ອນໄຫວວຽກງານເຕັກໂນໂລຊີ, ນະວັດຕະກຳ, ໂທລະຄົມມະນາຄົມ, ອິນເຕີເນັດ, ໄປສະນີ ແລະ ຄວາມປອດໄພໄຊເບີ;
5. ຄຸ້ມຄອງ ແລະ ດັດສົມ ເຄືອຂ່າຍການສື່ສານ, ອັດຕາຄ່າທຳນຽມ, ອັດຕາຄ່າບໍລິການ, ການດຳເນີນທຸລະກິດທາງດ້ານເຕັກໂນໂລຊີ, ໂທລະຄົມມະນາຄົມ, ອິນເຕີເນັດ, ການສື່ສານຜ່ານດາວທຽມ ແລະ ໄປສະນີ ໃຫ້ມີການຂະຫຍາຍເຄືອຂ່າຍການບໍລິການຢ່າງທົ່ວເຖິງ ແລະ ລົງສູ່ເຂດຫ່າງໄກສອກຫຼີກ ຫລື ເຂດບູລິມະສິດຂອງລັດຖະບານ ພ້ອມທັງຮັບປະກັນດ້ານຄຸນນະພາບ ແລະ ລາຄາທີ່ເໝາະສົມ;
6. ຄົ້ນຄ້ວາສ້າງ ແລະ ກຳນົດມາດຕະຖານ, ກວດກາ ແລະ ຕິດຕາມຄຸນນະພາບ ຂອງອຸປະກອນໂທລະຄົມມະນາຄົມ, ລະບົບການບໍລິການໄປສະນີ, ລະບົບໂທລະຄົມມະນາຄົມ, ລະບົບອິນເຕີເນັດ, ລະບົບການບໍລິຫານລັດດີຈີຕອນ ແລະ ບັນດາລະບົບການບໍລິການດີຈີຕອນຕ່າງໆ ພ້ອມທັງຮັບປະກັນໃຫ້ມີຄວາມປອດໄພ ແລະ ເຊື່ອມໂຍງກັນໄດ້;
7. ຄຸ້ມຄອງ, ພັດທະນາ, ຈັດສັນ, ຕິດຕາມ ແລະ ກວດກາ ການນຳໃຊ້ຊັບພະຍາກອນໄປສະນີ, ໂທລະຄົມມະນາຄົມ, ເຕັກໂນໂລຊີດີຈີຕອນ, ເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ, ອິນເຕີເນັດ ແລະ ເຕັກໂນໂລຊີ-ນະວັດຕະກຳ ຢ່າງມີປະສິດທິພາບ; ຄຸ້ມຄອງ ແລະ ພັດທະນາວຽກງານຄື້ນຄວາມຖີ່ວິທະຍຸສື່ສານ ແລະ ການສື່ສານຜ່ານດາວທຽມ ໃຫ້ສອດຄ່ອງກັບກົດໝາຍ, ລະບຽບການ ແລະ ສົນຍາສົນທິສັນຍາທີ່ ສປປ ລາວ ເປັນພາຄີ;
8. ພັດທະນາ, ຄຸ້ມຄອງ ແລະ ຊຸກຍູ້ສົ່ງເສີມການນຳໃຊ້ລະບົບບໍລິຫານ ແລະ ບໍລິການລັດດ້ວຍເຕັກໂນໂລຊີດີຈີຕອນ ໃຫ້ທັນສະໄໝ ແລະ ມີມາດຕະຖານດຽວກັນ ເປັນຕົ້ນ ລະບົບຕົວເມືອງທັນສະໄໝ, ລະບົບເຄືອຂ່າຍພາກລັດ, ລະບົບເຊື່ອມໂຍງ ແລະ ຂໍ້ມູນພາກລັດ, ລະບົບປະຕູຖານຂໍ້ມູນແຫ່ງຊາດ, ລະບົບຢັ້ງຢືນຕົວຕົນດີຈີຕອນ, ລະບົບບໍລິຫານຫ້ອງການ, ລະບົບກອງປະຊຸມທາງໄກ, ລະບົບບໍລິການລັດແບບດີຈີຕອນ ແລະ ລະບົບບໍລິການສັງຄົມທີ່ທັນສະໄໝອື່ນໆ;
9. ສົ່ງເສີມການຫັນເປັນເສດຖະກິດດີຈີຕອນ, ການຫັນເປັນອຸດສະຫະກຳ ແລະ ທັນສະໄໝ ຂອງການຄຸ້ມຄອງ, ການຜະລິດ, ການຄ້າ ແລະ ການບໍລິການ ໂດຍເປັນແກນກາງໃຫ້ແກ່ທຸກພາກສ່ວນໃນການພັດທະນາເຕັກໂນໂລຊີດີຈີຕອນ;

10. ສ້າງ, ພັດທະນາ ແລະ ຄຸ້ມຄອງວຽກງານຄຸ້ມຄອງຄວາມປອດໄພໄຊເບີ ໃນຂອບເຂດທົ່ວປະເທດ ຮັບປະກັນລະບົບເຄືອຂ່າຍອິນເຕີເນັດ ພາຍໃນປະເທດມີຄວາມໝັ້ນທ່ຽງ ແລະ ຍືນຍົງ;
11. ຄຸ້ມຄອງ, ບໍລິຫານ, ສົ່ງເສີມ, ພັດທະນາ ແລະ ສະໜອງການບໍລິການ ພື້ນຖານໂຄງລ່າງ ແລະ ລະບົບສູນຂໍ້ມູນຂອງປະເທດ ເພື່ອການບໍລິການຮັບຝາກຂໍ້ມູນຂ່າວສານເອເລັກໂຕຣນິກ ຂອງພາກລັດ ແລະ ສັງຄົມ;
12. ຊຸກຍູ້ ແລະ ສົ່ງເສີມສະຕິປັນຍາ, ຫົວຄິດປະດິດສ້າງຂອງບຸກຄົນ ແລະ ການຈັດຕັ້ງທົ່ວສັງຄົມເຂົ້າໃນການຄົ້ນຄວ້າ, ພັດທະນາການຖ່າຍທອດ, ນຳໃຊ້ເຕັກນິກ-ເຕັກໂນໂລຊີຕ່າງໆ ແລະ ນຳໃຊ້ຜົນຂອງການຄົ້ນຄວ້າ, ການປະດິດສ້າງ ແລະ ໝູນໃຊ້ເຕັກໂນໂລຊີ-ນະວັດຕະກຳ ດ້ວຍຮູບການຕ່າງໆ; ຄົ້ນຄວ້າການປະກອບການທຸລະກິດ, ການຜະລິດ, ການນຳເຂົ້າ-ສົ່ງອອກ, ການລົງທຶນໃນການພັດທະນາ ດ້ານອຸດສາຫະກຳຮາດແວ, ຊອບແວ, ເຕັກໂນໂລຊີດີຈີຕອນ ແລະ ເຕັກໂນໂລຊີລະດັບສູງທີ່ກ້າວໜ້າ ແລະ ທັນສະໄໝ; ເຜີຍແຜ່ການນຳໃຊ້ນະວັດຕະກຳຕ່າງໆເຂົ້າໃນການພັດທະນາຂະແໜງການອື່ນ ແລະ ຂອງຕົນທັງຢູ່ສູນກາງ ແລະ ທ້ອງຖິ່ນ;
13. ພັດທະນາພື້ນຖານໂຄງລ່າງ, ສ້າງ ແລະ ປັບປຸງຫຼັກສູດ ເພື່ອຈັດຕັ້ງປະຕິບັດການຮຽນ-ການສອນ ທີ່ສະຖາບັນເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ; ກໍ່ສ້າງ-ບຳລຸງ ແລະ ຝຶກອົບຮົມໃຫ້ແກ່ພະນັກງານໃນແຕ່ລະໄລຍະ; ສ້າງຫຼັກສູດ, ຕຳລາການຮຽນ, ການສອນ ແລະ ຝຶກອົບຮົມ, ຈັດພິມບັນດາປຶ້ມຕຳລາ, ເອກະສານວິຊາສະເພາະ, ຮອບຮວມຂໍ້ມູນຜົນຂອງການສຶກສາຄົ້ນຄວ້າສ້າງລະບົບພາຫະນະ-ເຕັກນິກຮັບໃຊ້ວຽກງານກໍ່ສ້າງ-ບຳລຸງ ແລະ ຝຶກອົບຮົມຄວາມຮູ້ດ້ານວິຊາການ; ສ້າງ ແລະ ຍົກລະດັບຄວາມຮູ້ດ້ານວິຊາການ ໃຫ້ແກ່ບັນດາຂະແໜງການ, ສະຖາບັນການສຶກສາ, ພາກສ່ວນວິສາຫະກິດ ແລະ ພາກສ່ວນເອກະຊົນ ຢູ່ສູນກາງ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງກັບວຽກງານຂອງຂະແໜງເຕັກໂນໂລຊີ ແລະ ການສື່ສານ;
14. ຕິດຕາມ ແລະ ກວດກາບັນດາອົງການຈັດຕັ້ງພາຍໃນຂະແໜງການຂອງຕົນ ກ່ຽວກັບປະສິດທິພາບຂອງການປະຕິບັດວຽກງານ, ການຄຸ້ມຄອງງົບປະມານ, ການຄຸ້ມຄອງພື້ນຖານວັດຖຸ-ເຕັກນິກ, ການຄຸ້ມຄອງພະນັກງານ-ລັດຖະກອນ ແລະ ບັນຫາອື່ນໆ ບົນພື້ນຖານກົດໝາຍ ແລະ ລະບຽບການ;
15. ຄົ້ນຄວ້າສ້າງ, ປັບປຸງກົງຈັກການຈັດຕັ້ງ ແລະ ສ້າງລະບຽບການຄຸ້ມຄອງດ້ານຕ່າງໆ ລວມທັງໂຄງປະກອບການຈັດຕັ້ງ ແລະ ການກຳນົດຕຳແໜ່ງງານ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ ພ້ອມຂະແໜງການສາຍຕັ້ງທີ່ຂຶ້ນກັບ; ຄຸ້ມຄອງ, ສຶກສາອົບຮົມ, ບັນຈຸ-ສັບຊ້ອນ, ການປະຕິບັດນະໂຍບາຍ ແລະ ວິໄນຕໍ່ພະນັກງານ-ລັດຖະກອນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຕາມກົດໝາຍ ແລະ ລະບຽບການ;
16. ກຳນົດແຜນການເຄື່ອນໄຫວ ລວມທັງແຜນການລົງທຶນຂອງລັດ ໃນແຕ່ລະໄລຍະ ເຊິ່ງລວມເອົາແຜນປະຈຳເດືອນ, ງວດ, ປີ, 5 ປີ, ແຜນການໄລຍະຍາວ ແລະ ແຜນຍຸດທະສາດຂອງຂະແໜງເຕັກໂນໂລຊີ ແລະ ການສື່ສານ; ສ້າງແຜນລາຍຮັບ ແລະ ລາຍຈ່າຍງົບປະມານຂອງກະຊວງ; ຄຸ້ມຄອງ ແລະ ຈັດສັນງົບປະມານການລົງທຶນຂອງລັດ ສຳລັບການຄົ້ນຄວ້າ ແລະ ການພັດທະນາວຽກງານຂອງຂະແໜງເຕັກໂນໂລຊີ ແລະ ການສື່ສານ; ສ້າງ, ຄຸ້ມຄອງ ແລະ ພັດທະນາກອງທຶນພັດທະນາເສດຖະກິດດີຈີຕອນໃຫ້ມີຄວາມຍືນຍົງ ແລະ ເກີດຜົນປະໂຫຍດສູງສຸດແກ່ປະເທດຊາດ;
17. ປະຕິບັດໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງລັດຖະບານ, ນາຍົກລັດຖະມົນຕີ.

### ມາດຕາ 4 ຂອບເຂດສິດ

ຂອບເຂດສິດ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ ມີດັ່ງນີ້:

1. ສະເໜີປັບປຸງກົງຈັກການຈັດຕັ້ງຂອງຕົນຕໍ່ລັດຖະບານ, ກໍານົດຕໍາແໜ່ງງານ, ການບັນຈຸ, ສັບຊ້ອນ ແລະ ຈັດວາງບຸກຄະລາກອນໃນທົ່ວຂະແໜງການຂອງຕົນຕາມການແບ່ງຂັ້ນຄຸ້ມຄອງ;
2. ຊີ້ນໍາ ແລະ ຄຸ້ມຄອງຕາມສາຍຕັ້ງທາງດ້ານເຕັກນິກ, ວິຊາການ ໂດຍມີການແບ່ງຂັ້ນ, ແບ່ງຄວາມຮັບຜິດຊອບ ແລະ ສິດຕົກລົງບັນຫາ ໃຫ້ອົງການປົກຄອງທ້ອງຖິ່ນໃນການຄຸ້ມຄອງຢ່າງລະອຽດ;
3. ຮຽກໂຮມພະນັກງານນໍາພາ-ຄຸ້ມຄອງ ແລະ ນັກວິຊາການຂອງຂະແໜງເຕັກໂນໂລຊີ ແລະ ການສື່ສານ ເຂົ້າຮ່ວມປະຊຸມ ຫຼື ລາຍງານສ່ອງແສງວຽກງານ;
4. ອອກຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ແລະ ແຈ້ງການກ່ຽວກັບວຽກງານເຕັກໂນໂລຊີ, ນະວັດຕະກໍາ, ໂທລະຄົມມະນາຄົມ, ອິນເຕີເນັດ, ໄປສະນີ ແລະ ຄວາມປອດໄພໄຊເບີຂອງ ສປປ ລາວ ແລະ ເຜີຍແຜ່ແນວທາງນະໂຍບາຍ, ກົດໝາຍ, ລະບຽບການ ແລະ ມາດຕະການຕ່າງໆ ທີ່ກ່ຽວຂ້ອງກັບພາລະບົດບາດຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ;
5. ຄົ້ນຄວ້າ, ເຜີຍແຜ່ ແລະ ແນະນໍາບັນດາກໍານົດໝາຍເຕັກນິກ ເພື່ອຄຸ້ມຄອງມະຫາພາກ ວຽກງານເຕັກໂນໂລຊີ, ນະວັດຕະກໍາ, ໂທລະຄົມມະນາຄົມ, ອິນເຕີເນັດ, ໄປສະນີ ແລະ ຄວາມປອດໄພໄຊເບີ ຂອງ ສປປ ລາວ;
6. ກວດກາດ້ານເຕັກນິກ, ຢັ້ງຢືນກວດກາ, ກວດສອບ, ທົດສອບ, ຕີລາຄາ, ປະເມີນຜົນ ດ້ານໄປສະນີ, ໂທລະຄົມມະນາຄົມ, ອິນເຕີເນັດ, ເຕັກໂນໂລຊີດິຈິຕອນ, ດ້ານຄວາມປອດໄພທາງໄຊເບີ, ເຕັກໂນໂລຊີລະດັບສູງ, ເຕັກໂນໂລຊີອາວະກາດ ແລະ ນະວັດຕະກໍາ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ຫຼື ຕາມການສະເໜີຂອງຂະແໜງການທີ່ກ່ຽວຂ້ອງ;
7. ອອກ, ຕໍ່, ໂຈະ ຫຼື ຖອນ ໃບຢັ້ງຢືນແຜນນໍາເຂົ້າ, ສົ່ງອອກອຸປະກອນ ແລະ ຊອບແວ, ໃບອະນຸຍາດດໍາເນີນທຸລະກິດ ແລະ ການບໍລິການ ໃນຂົງເຂດຄວາມຮັບຜິດຊອບຂອງຂະແໜງເຕັກໂນໂລຊີ ແລະ ການສື່ສານ;
8. ຕິດຕາມ, ກວດກາ, ປັບໄໝ ຫຼື ຮ້ອງຟ້ອງຜູ້ລະເມີດລະບຽບກົດໝາຍ ທີ່ກ່ຽວຂ້ອງກັບຂະແໜງເຕັກໂນໂລຊີ ແລະ ການສື່ສານ;
9. ກວດກາ ແລະ ຢັ້ງຢືນ ຄຸນນະພາບ ແລະ ມາດຕະຖານເຕັກນິກ ດ້ານຄວາມປອດໄພ ຂອງອຸປະກອນ, ຄວາມປອດໄພຂອງພື້ນຖານໂຄງລ່າງດິຈິຕອນ, ລະບົບບໍລິການລັດດິຈິຕອນ (e-Services), ຜະລິດຕະພັນ ແລະ ການ ບໍລິການໄປສະນີ, ເຕັກໂນໂລຊີດິຈິຕອນ, ເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ, ໂທລະຄົມມະນາຄົມ, ອິນເຕີເນັດ, ຮາດແວ, ຊອບແວ, ໂປຣແກຣມເທິງອຸປະກອນເອເລັກໂຕຣນິກ, ທຸລະກໍາທາງເອເລັກໂຕຣນິກ, ນະວັດຕະກໍາ ແລະ ການສື່ສານທີ່ນໍາເຂົ້າ, ສົ່ງອອກ, ຈໍາໜ່າຍ ແລະ ນໍາໃຊ້ທັງພາກລັດ ແລະ ເອກະຊົນ ໃນ ສປປ ລາວ;
10. ດັດສົມອັດຕາຄ່າທໍານຽມ ແລະ ຄ່າປັບໄໝຄ່າບໍລິການດ້ານໄປສະນີ, ເຕັກໂນໂລຊີດິຈິຕອນ, ເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ, ໂທລະຄົມມະນາຄົມ, ອິນເຕີເນັດ, ເຕັກໂນໂລຊີ ແລະ ການສື່ສານທີ່ກ່ຽວຂ້ອງ;
11. ປະສານສົມທົບກັບຂະແໜງການອື່ນ ແລະ ອົງການທີ່ກ່ຽວຂອ້ງ ໃນການເຄື່ອນໄຫວຕ້ານ ແລະ ສະກັດກັ້ນການກະທໍາຄວາມຜິດທາງອິນເຕີເນັດ ແລະ ທາງສື່ສັງຄົມອອນລາຍ;
12. ໃຊ້ມາດຕະການປຸກລະດົມທຸກແຫຼ່ງຊັບພະຍາກອນໄປສະນີ, ເຕັກໂນໂລຊີດິຈິຕອນ, ເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ, ໂທລະຄົມມະນາຄົມ, ອິນເຕີເນັດ ແລະ ການສື່ສານ ເພື່ອຮັບໃຊ້ສະຖານະການສຸກ

ເສີມ, ເພື່ອຮັບປະກັນຄວາມສະຫງົບສຸກ ແລະ ຄວາມປອດໄພຂອງຊາດ, ເພື່ອແກ້ໄຂໄພພິບັດທາງທຳມະຊາດຕ່າງໆ ຢ່າງມີປະສິດທິພາບ ຕາມການມອບໝາຍຂອງລັດຖະບານ;

13. ອະນຸມັດໃຫ້ຫ້ອງການ, ອົງການ, ບັນດາກົມ, ສູນ, ສະຖາບັນຈັດກອງປະຊຸມ, ຝຶກອົບຮົມ ຫຼື ສຳມະນາທາງດ້ານວິຊາການ;
14. ຄົ້ນຄວ້າ, ປະກອບຄຳເຫັນ ແລະ ຕົກລົງກ່ຽວກັບການລົງທຶນພາຍໃນ ແລະ ຕ່າງປະເທດ ດ້ານວຽກງານເຕັກໂນໂລຊີ, ນະວັດຕະກຳ, ໂທລະຄົມມະນາຄົມ, ອິນເຕີເນັດ, ໄປສະນີ ແລະ ຄວາມປອດໄພໄຊເບີ ຂອງ ສປປ ລາວ ບົນພື້ນຖານກົດໝາຍ ແລະ ລະບຽບການທີ່ລັດຖະບານປະກາດໃຊ້ໃນແຕ່ລະໄລຍະ;
15. ພົວພັນ, ເຊັນສັນຍາ, ອະນຸສັນຍາ, ຮ່ວມມື, ຍາດແຍ່ງການຊ່ວຍເຫຼືອ, ການລົງທຶນຈາກພາຍໃນ ແລະ ຕ່າງປະເທດເພື່ອພັດທະນາວຽກງານ ເຕັກໂນໂລຊີ, ນະວັດຕະກຳ, ໂທລະຄົມມະນາຄົມ, ອິນເຕີເນັດ, ໄປສະນີ ແລະ ຄວາມປອດໄພໄຊເບີ ຕາມການມອບໝາຍ ຫຼື ຕາມການຕົກລົງຂອງລັດຖະບານ ບົນພື້ນຖານກົດໝາຍ, ລະບຽບການທີ່ກຳນົດໄວ້;
16. ສະເໜີແຜນງົບປະມານ, ສ້າງແຜນງົບປະມານລາຍຮັບ-ລາຍຈ່າຍ, ຄຸ້ມຄອງ ແລະ ກວດກາ ການນຳໃຊ້ງົບປະມານແລະ ດັດແກ້ງົບປະມານຂອງກະຊວງເຕັກໂນໂລຊີ ແລະ ການສື່ສານໃຫ້ໄປຕາມລະບຽບ ແລະ ກົດໝາຍທີ່ກຳນົດໄວ້;
17. ຄຸ້ມຄອງ ແລະ ກວດກາ ການນຳໃຊ້ງົບປະມານ ຂອງຂະແໜງການເຕັກໂນໂລຊີ ແລະ ການສື່ສານຄຸ້ມຄອງໃຫ້ຖືກຕ້ອງຕາມລະບຽບກົດໝາຍ ກຳນົດໄວ້;
18. ປະຕິບັດສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງລັດຖະບານ, ນາຍົກລັດຖະມົນຕີ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

ມາດຕາ 5 ໂຄງປະກອບກົງຈັກ

ໂຄງປະກອບກົງຈັກ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ ປະກອບດ້ວຍ:

1. ຫ້ອງການ;
2. ກົມຈັດຕັ້ງ ແລະ ພະນັກງານ;
3. ກົມກວດກາ;
4. ກົມແຜນການ ແລະ ການເງິນ;
5. ກົມໄປສະນີ;
6. ກົມຄື້ນຄວາມຖີ່ວິທະຍຸສື່ສານ;
7. ກົມເຕັກໂນໂລຊີດີຈີຕ່ອນ;
8. ກົມຄວາມປອດໄພໄຊເບີ;
9. ກົມເຕັກໂນໂລຊີ ແລະ ນະວັດຕະກຳ;
10. ອົງການດັດສົມໂທລະຄົມມະນາຄົມ;
11. ສູນອິນເຕີເນັດແຫ່ງຊາດ;
12. ສູນບໍລິຫານລັດດີຈີຕ່ອນ;
13. ສູນສົ່ງເສີມ ແລະ ຖ່າຍທອດເຕັກໂນໂລຊີ;

14. ສະຖາບັນຄົ້ນຄວ້ານຳໃຊ້ເຕັກໂນໂລຊີອັດສະລິຍະ;
15. ສະຖາບັນເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ.

ກະຊວງເຕັກໂນໂລຊີ ແລະ ການສື່ສານ ມີກົງຈັກການຈັດຕັ້ງທາງດ້ານວິຊາການ ຂອງຕົນຢູ່ທ້ອງຖິ່ນ ຕາມເງື່ອນໄຂຕົວຈິງຢູ່ແຕ່ລະຂັ້ນ ຕາມການຕົກລົງ ຂອງອົງການປົກຄອງທ້ອງຖິ່ນ ໂດຍເອກະພາບກັບກະຊວງເຕັກໂນໂລຊີ ແລະ ການສື່ສານ ແລະ ກະຊວງພາຍໃນ.

ມາດຕາ 6 ໂຄງປະກອບບຸກຄະລາກອນ

ບຸກຄະລາກອນ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ ປະກອບມີ:

1. ລັດຖະມົນຕີກະຊວງ 01 ທ່ານ ຮັບຜິດຊອບຕໍ່ລັດຖະບານ, ນາຍົກລັດຖະມົນຕີ ແລະ ຮອງນາຍົກລັດຖະມົນຕີ ຜູ້ຊີ້ນຳຂົງເຂດວຽກງານເຕັກໂນໂລຊີ ແລະ ການສື່ສານ ໃນການຄຸ້ມຄອງມະຫາພາກ ຕາມຂະແໜງການຕົນຮັບຜິດຊອບ ຊຶ່ງມີສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍລັດຖະບານ;

   ໃນເວລາຕິດຂັດລັດຖະມົນຕີກະຊວງ ຕ້ອງມອບສິດໃຫ້ຮອງລັດຖະມົນຕີທ່ານໃດໜຶ່ງ ເປັນຜູ້ຮັກສາການແທນ.

2. ຮອງລັດຖະມົນຕີຈຳນວນໜຶ່ງ ຊ່ວຍລັດຖະມົນຕີກະຊວງ ໃນການຊີ້ນຳວຽກງານຂອງຕົນ, ຮັບຜິດຊອບວຽກງານໃດໜຶ່ງຕາມການມອບໝາຍຂອງລັດຖະມົນຕີກະຊວງ;

   ຮອງລັດຖະມົນຕີ ເປັນຜູ້ຮັກສາການແທນ ໃນເວລາລັດຖະມົນຕີກະຊວງຕິດຂັດ.

3. ຫົວໜ້າຫ້ອງການ, ຫົວໜ້າກົມ, ຫົວໜ້າອົງການລັດທຽບເທົ່າກົມ, ຮອງຫົວໜ້າຫ້ອງການ, ຮອງຫົວໜ້າກົມ, ຮອງຫົວໜ້າອົງການລັດທຽບເທົ່າກົມ, ຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະ ລັດຖະກອນວິຊາການຈຳນວນໜຶ່ງຕາມການກຳນົດຕຳແໜ່ງງານ.

ການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກຳນົດໄວ້.

## ໝວດທີ 4
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

ມາດຕາ 7 ຫຼັກການ

ກະຊວງເຕັກໂນໂລຊີ ແລະ ການສື່ສານປະຕິບັດຕາມຫຼັກການ ດັ່ງນີ້:

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ ກ່ຽວກັບບັນຫາລວມຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງຂອງພະນັກງານ-ລັດຖະກອນທຸກລະດັບ;
3. ທຸກການເຄື່ອນໄຫວຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ ແລະ ພະນັກງານ-ລັດຖະກອນ ແມ່ນອີງໃສ່ກົດໝາຍລະບຽບການ ແລະ ຫຼັກການລວມຂອງລັດຖະບານ, ນຳເອົາແນວທາງນະໂຍບາຍຂອງພັກ ແລະ ລັດຖະບານມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

**ມາດຕາ 8 ແບບແຜນວິທີເຮັດວຽກ**

ກະຊວງເຕັກໂນໂລຊີ ແລະ ການສື່ສານ ມີແບບແຜນວິທີເຮັດວຽກ ດັ່ງນີ້:

1. ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການລະອຽດ; ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ, ປະສານສົມທົບຢ່າງແໜ້ນແຟ້ນກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນແນໃສ່ໝູນໃຊ້ກຳລັງແຮງຂອງທຸກພາກສ່ວນເພື່ອພັດທະນາວຽກງານຂະແໜງເຕັກໂນໂລຊີ ແລະ ການສື່ສານ;
2. ເຮັດວຽກມີການກວດກາ, ຕິດຕາມຊຸກຍູ້, ສະຫຼຸບຖອດຖອນບົດຮຽນ, ຕີລາຄາຜົນໄດ້ຮັບ-ຜົນເສຍ ພ້ອມທັງປະຕິບັດລາຍງານສ່ອງແສງຢ່າງເຂັ້ມງວດ;
3. ປະຕິບັດລະບອບປະຊຸມປະຈຳເດືອນ, 3 ເດືອນ, 6 ເດືອນ, ປະຈຳປີ ຫຼື ກອງປະຊຸມວິຊາການ ແລະ ປະຕິບັດລະບອບລາຍງານໃຫ້ລັດຖະບານ ແລະ ນາຍົກລັດຖະມົນຕີເປັນປົກກະຕິ;
4. ປະຕິບັດການພົວພັນປະສານງານພາຍໃນ ແລະ ພາຍນອກໃຫ້ສອດຄ່ອງຕາມລະບຽບຫຼັກການ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 9 ງົບປະມານ ແລະ ຕາປະທັບ**

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ມີງົບປະມານ ແລະ ຕາປະທັບຂອງຕົນ ເພື່ອຮັບໃຊ້ເຄື່ອນໄຫວວຽກງານທາງລັດຖະການ ຕາມລະບຽບກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງກຳນົດ.

**ມາດຕາ 10 ການຜັນຂະຫຍາຍ**

ມອບໃຫ້ລັດຖະມົນຕີກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນຜູ້ອອກຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການ, ບັນດາກົມ, ສະຖາບັນ, ສູນ ແລະ ກົງຈັກການຈັດຕັ້ງຂອງທ້ອງຖິ່ນທີ່ຢູ່ພາຍໃຕ້ການຊີ້ນຳດ້ານວິຊາການ ທີ່ລະບຸໄວ້ໃນມາດຕາ 5 ຂອງດຳລັດ ສະບັບນີ້ ບົນພື້ນຖານການແບ່ງຂັ້ນຄຸ້ມຄອງ, ມອບຄວາມຮັບຜິດຊອບຢ່າງຈະແຈ້ງ, ຮັດກຸມ ແລະ ເໝາະສົມ ໃຫ້ອົງການປົກຄອງທ້ອງຖິ່ນ ເພື່ອຮັບໃຊ້ໃຫ້ແກ່ການເຄື່ອນໄຫວວຽກງານໃຫ້ໄດ້ຮັບຜົນດີ.

**ມາດຕາ 11 ການຈັດຕັ້ງປະຕິບັດ**

ກະຊວງເຕັກໂນໂລຊີ ແລະ ການສື່ສານ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ, ນະຄອນຫຼວງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 12 ຜົນສັກສິດ**

ດຳລັດສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ນາຍົກລັດຖະມົນຕີ

**ພັນຄຳ ວິພາວັນ**